NSW HEALTH

Lao
August 2004
[DOH-7260]

# ເຈັ້ຍພັບເຣື່ອງຮັກສາຂໍ້ມູນສ່ວນຕົວສໍາລັບຄົນເຈັບ

## Privacy Leaflet for Patients

**ໜ້າທີ່ຂອງພວກເຮົາ**

ພແນກອະນາມັຍສາທາຣະນະແຫ່ງຣັດ ນຊວ ໄດ້ຖືເປັນພາຣະກິດໃນການຮັກສາຂໍ້ມູນສ່ວນຕົວຂອງຄົນເຈັບ, ແລະໄດ້ນໍາໃຊ້ມາດຕະການຕ່າງໆເພື່ອປະຕິບັດຕາມໜ້າທີ່ຂອງຕົນພາຍໃຕ້ Health Records and Information Privacy Act 2002.

ເຈັ້ຍຂໍ້ມູນແຜ່ນນີ້ສເນີຣາຍລະອຽດໃຫ້ທ່ານຮູ້ ວ່າ ມີຂໍ້ມູນຫຍັງແດ່ກ່ຽວກັບຕົວທ່ານຊຶ່ງຖືກເກັບກໍາໄວ້, ທ່ານຈະສາມາດເຂົ້າໄປເບິ່ງຂໍ້ມູນດັ່ງກ່າວນີ້ໄດ້ຢ່າງໃດ ແລະຈຸດປະສົງໃນການທີ່ຂໍ້ມູນສ່ວນຕົວທ່ານຖືກນໍາມາໃຊ້ແລະເປີດເຜີຍ. ຂໍ້ມູນສ່ວນຕົວຂອງທ່ານຮວມມີຣາຍລະອຽດສ່ວນຕົວແລະຂໍ້ມູນສຸຂພາບສ່ວນຕົວຊຶ່ງກ່ຽວກັບການປິ່ນປົວຂອງທ່ານ.

**ການເກັບກໍາ**

ພວກເຮົາເກັບກໍາເອົາຂໍ້ມູນສ່ວນຕົວຂອງທ່ານ ກໍເພື່ອວ່າພວກເຮົາຈະສາມາດໃຫ້ການປິ່ນປົວແລະ ໃຫ້ຄໍາແນະນໍາແກ່ທ່ານ. ຜົນຈາກການກວດຫາພຍາດແລະຣາຍລະອຽດເພີ້ມເຕີມທີ່ເຮົາເກັບກໍາເອົາໄວ້ໃນຂນະທີ່ທ່ານກໍາລັງໄດ້ຮັບການປິ່ນປົວຢູ່ນັ້ນແມ່ນໄດ້ເກັບໄວ້ກັບບັນທຶກເຣື່ອງສຸຂພາບຂອງທ່ານ. ພວກເຮົາຈະເກັບກໍາແຕ່ຂໍ້ມູນທີ່ກ່ຽວຂ້ອງແລະຈໍາເປັນຕໍ່ການປິ່ນປົວຮັກສາທ່ານເທົ່ານັ້ນ ແລະເພື່ອຈະໄດ້ບໍຣິຫານເຣື່ອງ ການບໍຣິການ ສຸຂພາບ.

ພວກເຮົາຈະເກັບກໍາຂໍ້ມູນຈາກທ່ານໂດຍກົງໂລດ, ຖ້າເປັນໄປໄດ້. ພວກເຮົາອາດຕ້ອງໄດ້ເກັບກໍາຂໍ້ມູນຈາກນັກການແພດ ຄົນອື່ນໆທີ່ເຄີຍໄດ້ປິ່ນປົວທ່ານມາກ່ອນ. ໃນກໍຣະນີສຸກເສີນ ເຮົາກໍອາດຈໍາເປັນຕ້ອງໄດ້ເກັບກໍາເອົາຂໍ້ມູນ ຈາກສະມາຊິກຄອບຄົວ, ໝູ່ເພື່ອນ, ຜູ້ດູແລທ່ານ ຫຼື ຄົນອື່ນໆທີ່ສາມາດຊ່ວຍພວກເຮົາໃຫ້ການດູແລຕໍ່ທ່ານຢ່າງດີທີ່ສຸດ.

ຂໍ້ມູນຂອງທ່ານອາດຈະຖືກເກັບກໍາໄວ້ໃນແຟ້ມເຈ້ຍຫຼືແຟ້ມອີເລັກໂຕຣນິກ. ພວກເຮົາຈະນໍາໃຊ້ທຸກໆຂັ້ນຕອນທີ່ເໝາະສົມເພື່ອໃຫ້ແນ່ໃຈວ່າຂໍ້ມູນກ່ຽວກັບຕົວທ່ານທີ່ເຮົາເກັບກໍາໄວ້ນັ້ນຈະຖືກເກັບໄວ້ຢ່າງປອດພັຍ. ມີກົດໝາຍບັງຄັບໃຫ້ພວກເຮົາ ຕ້ອງເກັບ ບັນທຶກກ່ຽວກັບສຸຂພາບຂອງທ່ານໄວ້ໃຫ້ຄົບກໍານົດເວລານຶ່ງ ຊຶ່ງຂຶ້ນ ກັບວ່າແມ່ນບັນທຶກຊນິດໃດແລະວິທີເກັບແບບໃດ. ພວກເຮົາມີລະບົບທີ່ເໝາະສົມແລະມີນະໂຍບາຍທີ່ວາງອອກໄວ້ເພື່ອປ້ອງກັນຂໍ້ມູນຂອງທ່ານໃຫ້ພົ້ນຈາກການຕົກຫຼົ່ນເສັຍຫາຍ, ປ້ອງກັນຄົນທີ່ບໍ່ມີສິດ ບໍ່ໃຫ້ເຂົ້າໄປເບິ່ງຂໍ້ມູນໄດ້ ແລະບໍ່ໃຫ້ໃຊ້ຂໍ້ມູນໄປໃນທາງບໍ່ຖືກຕ້ອງ.

ຖ້າທ່ານບໍ່ປະສົງຢາກໃຫ້ພວກເຮົາເກັບກໍາເອົາຂໍ້ມູນບາງຢ່າງກ່ຽວກັບຕົວທ່ານ, ທ່ານຕ້ອງໄດ້ບອກໃຫ້ພວກເຮົາຮູ້ແລະ ພວກເຮົາ ຈະໄດ້ປຶກສາເຣື່ອງນີ້ກັບທ່ານເຖິງຜົນສະທ້ອນທີ່ອາດເກີດຂຶ້ນກັບການດູແລສຸຂພາບຂອງທ່ານ.

ການໃຊ້ແລະການເປີດເຜີຍ

ພະນັກງານທຸກໆຄົນແມ່ນຖືກບັງຄັບພາຍໃຕ້ກົດໝາຍແລະກົດຈັນຍາບັນການເຮັດວຽກໃຫ້ເກັບຂໍ້ມູນຂອງທ່ານໄວ້ເປັນຄວາມລັບ.
ພະນັກງານຈະໃຊ້ຫຼືເປີດເຜີຍຂໍ້ມູນຂອງທ່ານ ເພື່ອຈຸດປະສົງໃນການປິ່ນປົວທ່ານໂດຍກົງເທົ່ານັ້ນ, ແລະຕາມແບບອັນຄວນສໍາລັບການສືບຕໍ່ດູແລປິ່ນປົວສຸຂພາບໃຫ້ທ່ານໃນປັດຈຸບັນແລະອະນາຄົດ. ພະນັກງານທີ່ກ່ຽວຂ້ອງກັບການປິ່ນປົວທ່ານອາດຈະມີສ່ວນໃນການໃຊ້ຂໍ້ມູນສ່ວນຕົວກ່ຽວກັບສຸຂພາບຂອງທ່ານ ເພື່ອວ່າຈະໄດ້ກໍານົດແຜນການປິ່ນປົວທີ່ດີທີ່ສຸດໃຫ້ແກ່ທ່ານ ແລະເພື່ອຊ່ວຍໃນການບໍຣິຫານເຣື່ອງ ບໍຣິການສຸຂພາບແກ່ຕົວທ່ານ. ຂໍ້ມູນອັນເໝາະສົມກ່ຽວກັບເຣື່ອງບໍຣິການປິ່ນປົວສຸຂພາບທີ່ທ່ານໄດ້ຮັບຈະໄດ້ຖືກສົ່ງໄປໃຫ້ທ່ານໝໍປົວພຍາດທົ່ວໄປ (GP) ທີ່ທ່ານໄດ້ສເນີຊື່ມາ, ສົ່ງໃຫ້ພແນກປິ່ນປົວພຍາດແຫ່ງອື່ນ ຫຼື ໂຮງພຍາບານທີ່ມີສ່ວນໃນການປິ່ນປົວທ່ານ, ຫຼືສົ່ງໃຫ້ Ambulance Service of NSW, ສົ່ງໃຫ້ແພດ ຊ່ວຍຊານເມື່ອທ່ານຖືກສົ່ງໄປຫາແພດເຫຼົ່ານັ້ນ, ເພື່ອຈຸດປະສົງການກວດຫາພຍາດໃນຫ້ອງທົດລອງ, ການສ່ອງໄຟຟ້າ, ແລະ ອື່ນໆ.
ພວກເຮົາຈໍາເປັນຕ້ອງໄດ້ເປີດເຜີຍຂໍ້ມູນບາງຢ່າງຂອງຄົນເຈັບ ໃຫ້ແກ່ຫ້ອງການຂອງຣັຖບານປະຈໍາຣັດແລະຣັຖບານກາງ ເພື່ອປະຕິບັດຕາມກົດໝາຍກ່ຽວກັບການລາຍງານພຍາດທີ່ຕ້ອງໄດ້ແຈ້ງໃຫ້ທາງການຮູ້ ແລະ ເພື່ອການເກັບກໍາສະຖິຕິ, ຍົກຕົວຢ່າງ, ການລົງທະບຽນການເກີດແລະການຕາຍ. ຂໍ້ມູນສ່ວນຕົວຂອງທ່ານອາດຈະໄດ້ຖືກໃຊ້ເປັນຫຼັກຖານໃນສານຖ້າຫາກວ່າສານສັ່ງ.

ພວກເຮົາອາດຈະໃຊ້ຫຼືເປີດເຜີຍຂໍ້ມູນຂອງຄົນເຈັບສຳລັບການເກັບເງິນຄ່າປິ່ນປົວ, ການລາຍງານຕາມກົດໝາຍ ແລະສຳລັບຈຸດປະສົງຢ່າງອື່ນທີ່ຕ້ອງໄດ້ນຳມາໃຊ້ໃນການປະຕິບັດງານຂອງພະແນກສາທາຣະນະສຸກແຫ່ງຣັດ NSW, ຊຶ່ງຮວມເຖິງຄວາມປອດພັຍແລະ ການລິເລີ້ມຄວາມຄິດໃໝ່ເຣື່ອງການປັບປຸງຄຸນນະພາບ. ຖ້າວ່າຢູ່ໃນກໍຣະນີທີ່ກ່ຽວຂ້ອງກັນ, ພວກເຮົາອາດຈະຕ້ອງໄດ້ເປີດເຜີຍຂໍ້ມູນຂອງຄົນເຈັບໃຫ້ແກ່ເມດີແຄຣ໌, ບໍຣິສັດ ປະກັນພັຍສຸຂພາບເອກກະຊົນ, Department of Veterans' Affairs, Australian Council on Healthcare Standards (ຫຼື ຫ້ອງການທີ່ຖືກແຕ່ງຕັ້ງໃຫ້ຮັບຜິດຊອບທີ່ຄ້າຍຄືກັນ).

ພວກເຮົາອາດຈະໃຊ້ຂໍ້ມູນຂອງທ່ານ ເພື່ອຕິດຕໍ່ຫາທ່ານກ່ຽວກັບການສຳຣວດຄວາມພໍໃຈຂອງຄົນເຈັບ ຊຶ່ງຈະ ຊ່ວຍ ພວກເຮົາ ໃນການປະເມີນ ແລະປັບປຸງການບໍຣິການຂອງພວກເຮົາ.
ພວກເຮົາອາດຈະໃຊ້ຫຼືເປີດເຜີຍຂໍ້ມູນຂອງທ່ານເພື່ອຈຸດປະສົງຂ້າງລຸ່ມນີ້ໂດຍອີງຕາມກົດລະບຽບທາງກົດໝາຍຊຶ່ງ
ກຳນົດອອກພາຍໃຕ້ກົດໝາຍວ່າດ້ວຍການຮັກສາຂໍ້ມູນສ່ວນຕົວ:

- ສຳລັບໂຄງການຄົ້ນຄວ້າເພື່ອຜົນປໂຍດສ່ວນຮວມຊຶ່ງປະຕິບັດຕາມວິທີດຳເນີນການຢ່າງເຄັ່ງຄັດແລະໄດ້ຮັບອະນຸມັດຈາກຄນະກັມມະການຄວບຄຸມເຣື່ອງການຄົ້ນຄວ້າກ່ຽວກັບມະນຸດຊົນແລະຈັນຍາບັນ
(Human Research and Ethics Committee).
- ສຳລັບຈຸດປະສົງໃນການຝຶກອົບຮົມພະນັກງານແລະນັກຮຽນ
- ສຳລັບຈຸດປະສົງໃນການວາງແຜນ, ການເງິນຫຼືການບໍຣິຫານ ເພື່ອການບໍຣິການດ້ານສຸຂພາບ.

ໜັງສືຄູ່ມືກົດລະບຽບທາງກົດໝາຍມີໄວ້ເພື່ອໃຫ້ໝັ້ນໃຈວ່າເວລາໃດທີ່ຂໍ້ມູນຂອງທ່ານຖືກນຳມາໃຊ້ສຳລັບຈຸດປະສົງດັ່ງກ່າວຂ້າງເທິງແລະໃນຂນະດຽວກັນກໍເປັນການລຳບາກທີ່ຈະໄປຂໍຄວາມເຫັນພ້ອມຈາກທ່ານເສັຍກ່ອນນັ້ນ, ຂໍ້ມູນສ່ວນຕົວຂອງທ່ານ ທີ່ຖືກມາໃຊ້ນັ້ນຕ້ອງໃຫ້ເປັນຈຳນວນນ້ອຍທີ່ສຸດ, ແລະຕ້ອງມີການໃຊ້ຂໍ້ມູນສ່ວນຕົວນັ້ນຢ່າງມີມາຕຖານ ທີ່ ເຄັ່ງຄັດ.

ພວກເຮົາຈະຂໍຄວາມເຫັນພ້ອມຈາກທ່ານ ກ່ອນທີ່ຈະໃຊ້ຫຼືເປີດເຜີຍຂໍ້ມູນສ່ວນຕົວຂອງຄົນເຈັບສຳລັບຈຸດປະສົງນອກເໜືອໄປ ຈາກທີ່ກ່າວ ໄວ້ຂ້າງເທິງ, ເຊັ່ນເພື່ອກິຈກັມການຫາຣາຍໄດ້.

ການຂໍເຂົ້າເບິ່ງຂໍ້ມູນຂອງຕົວທ່ານເອງ
ທ່ານມີສິດໃນການຂໍເຂົ້າເບິ່ງຂໍ້ມູນທຸກໆຢ່າງກ່ຽວກັບຕົວທ່ານເອງຮວມທັງບັນທຶກທາງການແພດຈາກຜູ້ໃຫ້ບໍຣິການ ດ້ານສຸຂພາບ ໃນຣັດNSW. ໂດຍທົ່ວໆໄປແລ້ວທ່ານຈະຕ້ອງໄດ້ຍື່ນຂໍເປັນລາຍລັກອັກສອນແລະຕ້ອງໄດ້ສະແດງຫຼັກຖານ ປະຈຳຕົວ. ທ່ານອາດ ຕ້ອງໄດ້ຈ່າຍເງິນຖ້າຫາກວ່າທ່ານຕ້ອງການໃບສຳເນົາຂອງຂໍ້ມູນສ່ວນຕົວຫຼືບັນທຶກ ທາງ ການແພດ.

ການຂໍເຂົ້າເບິ່ງຂໍ້ມູນສ່ວນຕົວຂອງທ່ານອາດຈະຖືກປະຕິເສດຢູ່ໃນກໍຣະນີພິເສດ, ເຊັ່ນວ່າ ຖ້າຫາກທ່ານໄດ້ເບິ່ງ ຂໍ້ມູນແລ້ວອາດ ຈະເຮັດໃຫ້ຕົວທ່ານເອງຫຼືຄົນອື່ນສ່ຽງຕໍ່ການມີພັຍອັນຕຣາຍ.
ຖ້າຫາກທ່ານເຊື່ອວ່າຂໍ້ມູນກ່ຽວກັບຕົວທ່ານທີ່ພວກເຮົາເກັບກຳໄວ້ນັ້ນບໍ່ຖືກຕ້ອງແລະມີການຜິດພາດ, ກະຣຸນາບອກໃຫ້ພວກເຮົາ ຮູ້ແລະພວກເຮົາຈະໄດ້ດັດແປງແກ້ໄຂຂໍ້ມູນນັ້ນໃຫ້ຖືກຕ້ອງ. ຖ້າຫາກ ພວກເຮົາ ເຊື່ອວ່າ ຂໍ້ມູນນັ້ນ ຖືກຕ້ອງດີແລ້ວ, ທ່ານສາມາດ ຂໍໃຫ້ຄວາມເຫັນຂອງທ່ານຖືກຈົດລົງໄວ້ໃນໄວ້ໃນບັນທຶກຂອງທ່ານ.

ເພື່ອຂໍເຂົ້າໄປເບິ່ງຫຼືຂໍດັດແປງບັນທຶກທາງແພດຂອງທ່ານ ທ່ານຕ້ອງຍື່ນຄຳຂໍໄປທີ່ (Medical Record Department) ຫຼື ຂຽນໄປຫາ General Manager ຂອງພະແນກ ທີ່ໃຫ້ບໍຣິການສຸຂພາບແກ່ທ່ານ.

**ການຕິດຕໍ່ຫາພວກເຮົາ**
ຖ້າທ່ານມີຄຳຖາມຫຼືຢາກຮ້ອງຮຽນກ່ຽວກັບເຣື່ອງການເກັບຄວາມລັບຂໍ້ມູນສ່ວນຕົວຂອງທ່ານ, ກະຣຸນາ ຕິດຕໍ່ຫາ:

---

Insert Area Health Service contact

---

ເຮົາສາມາດໃຫ້ຣາຍລະອຽດແກ່ທ່ານໂດຍຜ່ານຄວາມຊ່ວຍເຫຼືອຂອງຜູ້ແປພາສາຖ້າທ່ານຕ້ອງການ. ນີ້ແມ່ນບໍຣິການຟຣີແລະ ຖືເປັນຄວາມລັບ.